**ກອງປະຊຸມປະຈຳປີ ຄັ້ງທີ 8 ວ່າດ້ວຍການຄົ້ນຄວ້າວິທະຍາສາດກ່ຽວກັບໄວໜຸ່ມ**
(The 8th Annual ARD)

**ຫົວຂໍ້: "ສະຖານະພາບປັດຈຸບັນກ່ຽວກັບສຸຂະພາບ ແລະ ການພັດທະນາໄວໜຸ່ມ"**
**17 ຕຸລາ 2023 ທີ່ ຄຣາວພລາຊາ ນະຄອນຫຼວງວຽງຈັນ, ສປປ ລາວ**

ສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ (ສສກ) ຮ່ວມກັບອົງການສະຫະປະຊາຊາດກອງທຶນສຳລັບປະຊາກອນ (UNFPA) ປະຈຳ ສປປ ລາວ ໄດ້ມີຄວາມຍິນດີປະກາດ ກ່ຽວກັບກອງປະຊຸມປະຈຳປີ ຄັ້ງທີ່ 8 ວ່າດ້ວຍການຄົ້ນຄວ້າວິທະຍາສາດກ່ຽວກັບໄວໜຸ່ມ ຊຶ່ງຈະຈັດໃຫ້ມີຂຶ້ນ ທີ່ ຄຣາວພລາຊາ, ນະຄອນຫຼວງວຽງຈັນ, ໃນວັນທີ່ 17 ຕຸລາ 2023.

ເຂົ້າໃຈກ່ຽວກັບບັນຫາສຸຂະພາບ ແລະ ການພັດທະນາໄວໜຸ່ມແບບຄົບຊຸດແມ່ນເປັນສິ່ງສຳຄັນສຳລັບໃຫ້ແກ່ຜູ້ທີ່ເຮັດໜ້າຕັດສິນບັນຫາ ແລະ ບັນດາຄູ່ຮ່ວມພັດທະນາເພື່ອພັດທະນາແຜນງານ/ກິດຈະກຳແຊກແຊງທີ່ແທດເໝາະກັບຄວາມເປັນຈິງທີ່ແນໃສ່ເພື່ອແກ້ໄຂບັນຫາໄວໜຸ່ມຢ່າງຖືກຕ້ອງ. ກອງປະຊຸມປະຈຳປີວ່າດ້ວຍຄົ້ນຄວ້າວິທະຍາສາດກ່ຽວກັບໄວໜຸ່ມ ຄັ້ງທີ່ 8 ຈະໄດ້ຈັດໃຫ້ມີຂຶ້ນໃນຮູບແບບເຂົ້າຮ່ວມຕົວຈິງ ແລະ ແບບອອນລາຍ ແລະ ມີການສະເໜີບົດແບບປາກເປົ່າ ແລະ ແບບໂປສເຕີ, ມີການສົນທະນາກ່ຽວກັບຜົນການຄົ້ນຄວ້າທີ່ໄດ້ຮັບໃນປະຈຸບັນ ຈາກ ສປປ ລາວ ແລະ ພາກພື້ນອາຊີຕາເວັນອອກສຽງໃຕ້. ກອງປະຊຸມຈະເລັງໃສ່ຫົວຂໍ້ ສິດທິ, ສຸຂະພາບຈະເລີນພັນ ແລະ ເພດສຳພັນໃນໄວໜຸ່ມ, ສຸຂະພາບຈິດ ແລະ ການສະໜັບສະໜູນທາງຈິດຕະສັງຄົມໃນໄວໜຸ່ມ, ໂພຊະນາການ, ພຶດຕິກຳທີ່ສົ່ງຜົນກະທົບຕໍ່ສຸຂະພາບ ແລະ ການປ່ຽນແປງດິນຟ້າອາກາດ.

ເປົ້າໝາຍລວມແມ່ນເພື່ອແລກປ່ຽນຂໍ້ມູນທີ່ເປັນຫລັກຖານພິສູດທີ່ໄດ້ມາຈາກການຄົ້ນຄວ້າວິທະຍາສາດໃນປະຈຸບັນກ່ຽວກັບໄວໜຸ່ມ ອາຍຸ 10-19 ປີ ເພື່ອສົ່ງເສີມນຳໃຊ້ຂໍ້ມູນດັ່ງກ່າວເຂົ້າໃນການສະໜັບສະໜູນ, ສ້າງນະໂຍບາຍ ແລະ ສ້າງບັນດາກິດຈະກຳແຊກແຊງແບບຄົບວົງຈອນທີ່ຈຳເປັນເພື່ອບັນລຸຄວາມສົມບູນພູນສຸກໃຫ້ແກ່ໄວໜຸ່ມ ແລະ ການພັດທະນາຮອບດ້ານໃນໄວໜຸ່ມທຸກຄົນ.

ກອງປະຊຸມປະຈຳປີວ່າດ້ວຍການຄົ້ນຄວ້າວິທະຍາສາດກ່ຽວກັບໄວໜຸ່ມ ໄດ້ເລີ່ມມາ ແຕ່ປີ 2016 ພາຍໃຕ້ກອບແຜນງານນາງນ້ອຍ ຊຶ່ງຈັດຂຶ້ນໂດຍສະຖາບັນສາທາລະນະສຸກສາດ ແລະ ການແພດເຂດຮ້ອນ ແລະ ອົງການ UNFPA. ເລີ່ມແຕ່ນັ້ນມາ ກອງປະຊຸມໄດ້ຈັດຂຶ້ນໃນທຸກໆປີ. ກອງປະຊຸມໄດ້ເປັນເວທີໃຫ້ແກ່ນັກຄົ້ນຄວ້າ, ຜູ້ປະຕິບັດຕົວຈິງ, ຜູ້ກຳນົດນະໂຍບາຍ, ແລະ ບັນດາຄູ່ຮ່ວມພັດທະນາ ແລກປ່ຽນຂໍ້ມູນທີ່ເປັນຫລັກຖານພິສູດ ແລະ ຮ່ວມມືກັນເພື່ອຜະລິດຂໍ້ມູນທີ່ເປັນຫລັກຖານພິສູດ.

ຄະນະຈັດຕັ້ງກອງປະຊຸມຄົ້ນຄວ້າວິທະຍາສາດກ່ຽວກັບໄວໜຸ່ມ ຄັ້ງທີ່ 8 ຂໍຮຽນເຊີນບັນດາທ່ານຍື່ນບົດຄັດຫຍໍ້ສໍາລັບການຄົ້ນຄວ້າທີ່ດໍາເນີນຢູ່ ສປປ ລາວ ແລະ/ຫລື ພາກພື້ນອາຊີຕາເວັນອອກສຽງໃຕ້ກ່ຽວກັບສະຖານະພາບປະຈຸບັນຕໍ່ກັບສຸຂະພາບ ແລະ ການພັດທະນາໄວໜຸ່ມ ເພື່ອແກ້ໄຂບັນຫາ/ບັນດາສິ່ງທ້າທາຍຕົ້ນຕໍ ແລະ ສົ່ງເສີມການນໍາໃຊ້ຂໍ້ມູນທີ່ເປັນຫລັກຖານພິສູດ.

ໃນບັນດາປະເທດທີ່ມີລາຍໄດ້ຕໍ່າ ສປປ ລາວ ແລະ/ຫຼື ບັນດາປະເທດທີ່ຢູ່ໃນພາກພື້ນອາຊີຕາເວັນອອກສຽງໃຕ້ສິດທິ, ສຸຂະພາບຈະເລີນພັນ ແລະ ເພດສໍາພັນໃນໄວໜຸ່ມລວມທັງການຖືພາໃນໄວໜຸ່ມ, ການວາງແຜນຄອບຄົວ, ແລະ ແລະ HIV/AIDS ແມ່ນຍັງເປັນບັນຫາ. ຜົນການວິເຄາະຂໍ້ມູນແບບໄວກ່ຽວກັບຜົນກະທົບຈາກພະຍາດໂຄວິດ-19 ຢູ່ ສປປ ລາວ ໄດ້ເປີດເຜີຍໃຫ້ຮູ້ວ່າ ການນໍາໃຊ້ວິທີຄຸມກໍາເນີດໄດ້ຫລຸດລົງເຖິງ 15% ແລະ ຜົນຕາມມາກໍ່ຄືຈໍານວນການເກີດເດັກມີຊີວິດເພີ່ມຂຶ້ນ ໃນປີ 2021. ການດູແລອາການສົນຈາກການລຸລູກກໍ່ເພີ່ມຂຶ້ນເພື່ອຈາກວ່າມີການທໍາແທ້ງແບບບໍ່ປອດໄພ. ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງເພີ່ມຂຶ້ນໂດຍສະເພາະຄວາມຮຸນແຮງໃນຄົວເຮືອນ ແລະ ການລະເມີດທາງເພດສໍາພັນ ແລະ ຄວາມຕ້ອງການຂໍຄໍາປຶກສາກ່ຽວກັບບັນຫານີ້ແມ່ນເພີ່ມຂຶ້ນ. ຂໍ້ມູນຈາກສາຍດ່ວນ ຊີ້ບອກວ່າມີການໂທເຂົ້າສາຍດ່ວນຂອງສະຫະພັນແມ່ຍິງເພີ່ມຂຶ້ນ 3-5 ເທົ່າໃນຊ່ວງມີການຈໍາກັດການເດີນທາງ/ການອອກບ້ານ, ປິດໂຮງຮຽນ ແລະ ຈໍາກັດການເຄື່ອນຍ້າຍ. ການອອກອອກໂຮງຮຽນຊັ້ນມັດທະຍົມເພີ່ມຂຶ້ນໂດຍສະເພາະແມ່ນເດັກຍິງ. ການວິເຄາະຂໍ້ມູນຈາກການສໍາຫລວດໂຮງຮຽນຢູ່ ສປປ ລາວ ສະແດງໃຫ້ເຫັນວ່າ ເດັກຊາຍອອກໂຮງຮຽນຫລາຍກວ່າເດັກຍິງທັງຊັ້ນມັດທະຍົມຕົ້ນ ແລະ ຊັ້ນມັດທະຍົມປາຍ ໃນລະຫວ່າງສົກຮຽນປີ 2016-2017 ເຖິງ 2019-2020 ແຕ່ ການລະບາດຂອງພະຍາດໂຄວິດ-19 ໄດ້ເຮັດໃຫ້ມີການປີ້ນກັບ ແນວໂນ້ມໃນລະດັບໂຮງຮຽນຊັ້ນມັດທະຍົມປາຍ ຄືອັດຕາການອອກໂຮງຮຽນໃນເດັກຍິງ (9,5%) ຫລາຍກວ່າເດັກຊາຍ (9,2%) ໃນຊັ້ນມັດທະຍົມປາຍ ໃນສົກຮຽນ 2020-2021.

**ເຊີນຍື່ນບົດຄັດຫຍໍ້ໃນຫົວຂໍ້ດັ່ງຕໍ່ໄປນີ້:**

1. ສິດທິ ແລະ ສຸຂະພາບຈະເລີນພັນ ແລະ ເພດສໍາພັນໃນໄວໜຸ່ມ ລວມທັງການຖືພາໃນໄວໜຸ່ມ ແລະ ການວາງແຜນຄອບຄົວ ແລະ HIV/AIDS;
2. ສຸຂະພາບຈິດ ແລະ ການສະໜັບສະໜູນທາງຈິດຕະສັງຄົມຂອງໄວໜຸ່ມ;
3. ໂພຊະນາການ;
4. ພຶດຕິກໍາທີ່ສົ່ງຜົນກະທົບຕໍ່ສຸຂະພາບ.
5. ການປ່ຽນແປງດິນຟ້າອາກາດ

ກອງປະຊຸມປະຈໍາປີວ່າດ້ວຍຄົ້ນຄວ້າວິທະຍາສາດກ່ຽວກັບໄວໜຸ່ມ ຄັ້ງທີ່ 8 ໄດ້ເຮັດໃຫ້ເຂົ້າໃຈຢ່າງເລິກເຊິ່ງຕໍ່ກັບບັນດາສິ່ງທ້າທາຍທີ່ໄວໜຸ່ມປະເຊີນຢູ່ ແລະ ຈະໃຫ້ຂໍ້ສະເໜີແນະທິດທາງໃນຕໍ່ໜ້າເພື່ອແກ້ໄຂບັນຫາ ແລະ ບັນດາສິ່ງທ້າທາຍຕໍ່ສຸຂະພາບ ແລະ ການພັດທະນາໄວໜຸ່ມໃຫ້ກ້າວໄປຂ້າງໜ້າ. ການເຜີຍແຜ່ຜົນການຄົ້ນຄວ້າ ແລະ ການສົນທະນາ ກ່ຽວກັບບັນດາສິ່ງທ້າທາຍຫລັກ ແລະ ການສົ່ງເສີມການນໍາໃຊ້ຂໍ້ມູນທີ່ເປັນຫລັກຖານພິສູດຈະຊ່ວຍໃນການປົກປ້ອງ ແລະ ສົ່ງເສີມສຸຂະພາບ ແລະ ການພັດທະນາໄວໜຸ່ມ ແລະ ກໍຈະເລັ່ງໃຫ້ມີການຈັດຕັ້ງປະຕິບັດກອງປະຊຸມສາກົນວ່າດ້ວຍການປະຕິບັດແຜນງານດ້ານປະຊາກອນ ແລະ ການພັດທະນາ ແລະ ບັນດາເປົ້າໝາຍການພັດທະນາທີ່ຍືນຍົງ.

**ການຍື່ນບົດຄັດຫຍໍ້:**

ບັນດານັກຄົ້ນຄວ້າວິທະຍາສາດຈາກ ສປປ ລາວ ແລະ ພາກພື້ນອາຊີຕາເວັນອອກສຽງໃຕ້ ຂໍສະເໜີໃຫ້ຍື່ນບົດຄັດຫຍໍ້ຊຶ່ງບົດຄັດຫຍໍ້ນັ້ນຕ້ອງມີປະມານ 500 ຄໍາ ເປັນພາສາອັງກິດ ຊຶ່ງໃນນັ້ນ ປະກອບມີ ຫົວຂໍ້ຂອງບົດຄັດຫຍໍ້, ປະຫວັດຄວາມເປັນມາ, ວິທີວິທະຍາ, ຜົນໄດ້ຮັບ, ສະຫລຸບ/ຂໍ້ສະເໜີແນະ. ກະລຸນາໃສ່ຊື່ເຕັມ, ອົງກອນ ແລະ ທີ່ຢູ່ອີເມວ ຂອງຜູ້ຂຽນຫລັກ ແລະ ຜູ້ຂຽນຮ່ວມ ແລະບອກວ່າໃຜເປັນຜູ້ສື່ສານ ແລະ ໃຜຈະເປັນຜູ້ສະເໜີ.
ຂໍໃຫ້ທ່ານຍື່ນບົດຄັດຫຍໍ້ໄປທາງອີເມວດັ່ງຕໍ່ໄປນີ້: laotphi.ARD8@gmail.com

ຄະນະກໍາມະການທົບທວນຈະໄດ້ຄັດເລືອດບົດຄັດຫຍໍ້ ແລະ ພິຈາລະນາໃຫ້ສະເໜີປາກເປົ່າ ຫຼື ສະເໜີເປັນໂປສະເຕີ. ຜູ້ຂຽນທີ່ຍື່ນບົດຄັດຫຍໍ້ນັ້ນຕ້ອງຍື່ນມາຍັງກອງປະຊຸມຄັ້ງນີ້ດ້ວຍຕົນເອງ ຫຼື ຜູ້ຂຽນຮ່ວມ. ບັນດາຜູ້ຂຽນບົດຄັດຫຍໍ້ທີ່ມາຈາກ ສປປ ລາວ ແລະ ໄດ້ຖືກຄັດເລືອກເຂົ້າຮ່ວມກອງປະຊຸມແມ່ນຈະໄດ້ຮັບຮອງໃຫ້ເຂົ້າຮ່ວມກອງປະຊຸມແບບຕົວຈິງ ແຕ່ມີຈໍານວນຈໍາກັດ.

**ວັນທີ ແລະ ສະຖານທີ່ ຈັດກອງປະຊຸມ**:

ວັນທີ ແລະ ສະຖານທີ່ຂອງກອງປະຊຸມ: **ວັນທີ່ 17 ຕຸລາ 2023, ທີ່ ຄຣາວພລາຊາ, ນະຄອນຫຼວງວຽງຈັນ**, ສປປ ລາວ (ການເຂົ້າຮ່ວມແມ່ນມີທາງເລືອກ ສາມາດເຂົ້າຮ່ວມຜ່ານທາງອອນລາຍ ແລະ ເຂົ້າຮ່ວມຕົວຈິງ)

ກອງປະຊຸມປະຈໍາປີ ຄັ້ງທີ່ 8 ວ່າດ້ວຍການຄົ້ນຄວ້າວິທະຍາສາດກ່ຽວກັບໄວໜຸ່ມແມ່ນຈະໄດ້ຈັດແບບປະສົມ ຊຶ່ງຈະມີຜູ້ເຂົ້າຮ່ວມຕົວຈິງ ແລະ ແບບອອນລາຍ.

**ເປີດຍື່ນບົດຄັດຫຍໍ້:** ວັນທີ່ 07 ກັນຍາ 2023

**ວັນປິດການຍື່ນບົດຄັດຫຍໍ້:** ວັນທີ່ 25 ກັນຍາ 2023 (17:00 ຂອງ ສປປ ລາວ)
ບົດຄັດຫຍໍ້ທີ່ໄດ້ຖືກຄັດເລືອກ ແມ່ນຈະໄດ້ແຈ້ງໃຫ້ຊາບ ໃນວັນທີ່ 01 ຕຸລາ 2023

**ຄູ່ມືແນນໍາສໍາລັບຂຽນບົດຄັດຫຍໍ້, ເຮັດບົດສະເໜີເປັນພາວເວີພອຍ ແລະ ເປັນໂປສດສະເຕີ**
ກະລຸນາເອົາບັນດາຈຸດດັ່ງຕໍ່ໄປນີ້ເຂົ້າ: ຫົວຂໍ້, ບັນດາຜູ້ຂຽນ ແລະ ຊື່ອົງກອນ, ປະຫວັດຄວາມເປັນມາ, ວັດຖຸປະສົງ, ວິທີວິທະຍາ, ຜົນໄດ້ຮັບ ແລະ ສະຫລຸບ/ຂໍ້ສະເໜີແນະ.

**ບົດຄັດຫຍໍ້ (500 ຄໍາ)**
ຫົວຂໍ້,
ບັນດາຜູ້ຂຽນ ແລະ ຊື່ອົງກອນ,
ປະຫວັດຄວາມເປັນມາ (100 ຄໍາ)
ວິທີວິທະຍາ (100 ຄໍາ)

ຜົນໄດ້ຮັບ (200 ຄຳ)

ສະຫລຸບ/ຂໍ້ສະເໜີແນະ (100 ຄຳ)

ຄຳສັບຫລັກ: 3-5 ຄຳ  Key words (3-5)

**ການສະເໜີເປັນພາວເວີພອຍ (10-12 ສະໄລ): ການສະເໜີ ແມ່ນ 15 ນາທີ**

**ຂະໜາດຂອງ ໂປສເຕີ:**

A0: 810 mm (ກວ້າງ) X 1189 mm (ຍາວ).

ກະລຸນາສົ່ງໂປສເຕີໃຫ້ຄະນະກຳມະການ ໃນວັນທີ່/ກ່ອນວັນທີ່ 10 ຕຸລາ 2022

ຄ່າພິມໂປສເຕີແມ່ນເປັນພາລະຂອງຜູ້ສະເໜີເອງ.



**ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:**

ປອ ດຣ ນ ຄຳແພງ ພອງລືຊາ, ສະຖາບັນສາທາລະນະສຸກສາດແລະການແພດເຂດຮ້ອນ

Email: khampheng.phongluxa@gmail.com; ໂທ: +856-20-55949082

ທ່ານ ສີວົງໄຊ ຈັງພິດຕິກຸນ, ອົງການ UNFPA ປະຈຳ ສປປ ລາວ

E-Mail: changpitikoun@unfpa.org; Tel: +856-21-55 628 745